ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ສະຫະພັນແມ່ຍິງ ຈັດຝຶກອົບຮົມວຽກງານກວດກາ







ໃນຕອນບ່າຍຂອງວັນທີ 20 ກັນຍາ 2022 ທີ່ຫ້ອງປະຊຸມໃຫຍ່ຊັ້ນ VII ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດຕັ້ງການຝຶກອົບຮົມວຽກງານກວດກາຮ່ວມກັບສູນກາງສະຫະພັນແມ່ຍິງລາວ ເຊິ່ງເປັນປະທານໂດຍ ທ່ານ ນ. ໄພທູນ ກິ່ງແກ້ວ ຮອງປະທານສະຫະພັນແມ່ຍິງ ທຫລ, ປະທານກວດກາສະຫະພັນແມ່ຍິງ ທຫລ ແລະ ໃຫ້ກຽດບັນຍາຍໂດຍ ທ່ານ ນ. ພູຄຳ ຄັດສະຫວ່າງ ຫົວໜ້າກົມກວດກາ, ສູນກາງສະຫະພັນແມ່ຍິງລາວ. ມີຜູ້ເຂົ້າຮ່ວມເຊິ່ງເປັນຜູ້ຕາງໜ້າຈາກສະຫະພັນແມ່ຍິງຮາກຖານ ທຫລ ທັງໝົດ 9 ຮາກຖານທີ່ຂຶ້ນກັບສະຫະພັນແມ່ຍິງ ທຫລ.



ເພື່ອເປັນການຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຂອງຄະນະບໍລິຫານງານສະຫະພັນແມ່ຍິງ ທະນາຄານແຫ່ງ ສປປ ລາວ ສະໄໝທີ X ກໍຄືປະຕິບັດແຜນການເຄື່ອນໄຫວວຽກງານກວດກາຂອງ ສະຫະພັນແມ່ຍິງ ທຫລ ໃຫ້ປະກົດຜົນເປັນຈິງ, ພ້ອມທັງເປັນການສ້າງຄວາມຮັບຮູ້ ແລະ ຄວາມເຂົ້າໃຈຢ່າງເລິກເຊິ່ງ ຕໍ່ກັບບົດຮຽນການກວດກາການເຄື່ອນໄຫວວຽກງານຂອງ ສູນກາງສະຫະພັນແມ່ຍິງລາວ ໃຫ້ແກ່ຄະນະຮັບຜິດຊອບວຽກງານກວດກາຂອງ ສະຫະພັນແມ່ຍິງ ທຫລ ແລະ ນຳເອົາໄປໝູນໃຊ້ເຂົ້າໃນການປະຕິບັດວຽກງານກວດກາຂອງຕົນໃຫ້ມີປະສິດທິພາບຍິ່ງຂຶ້ນກວ່າເກົ່າ.

ການຝຶກອົບຮົມ ໃນຄັ້ງນີ້ແມ່ນໄດ້ດຳເນີນເປັນເວລາເຄິ່ງວັນ, ຜູ້ເຂົ້າຮ່ວມໄດ້ເອົາໃຈໃສ່ຮັບຟັງ ແລະ ແລກປ່ຽນບົດຮຽນກັບຜູ້ບັນຍາຍ ດ້ວຍບັນຍາກາດຟົດຟື້ນຕາມຈຸດປະສົງ ແລະ ຄາດໝາຍທີ່ວາງໄວ້.

✍ ຂ່າວ ແລະ ພາບ ໂດຍ: ນ. ທິດສະບາ ທາມະວົງສິງ

*ຮັກບ້ານເກີດເມືອງນອນໃຊ້ຈ່າຍທອນເປັນເງິນກີບ*